ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ ເລກທີ 51/ພນ

ນະຄອນຫຼວງວຽງຈັນ, ວັນທີ 01 ກຸມພາ 2023

# ຂໍ້ຕົກລົງ
# ວ່າດ້ວຍ ມາດຕະຖານອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງພາຍໃນ ສະບັບເລກທີ 575/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ໜັງສືສະເໜີຂອງກົມການປົກຄອງທ້ອງຖິ່ນ ສະບັບເລກທີ 07/ປທ, ລົງວັນທີ 12 ມັງກອນ 2023.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະຖານ ແລະ ມາດຕະການ ກ່ຽວກັບອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ເພື່ອເປັນບ່ອນອີງໃຫ້ອົງການປົກຄອງທ້ອງຖິ່ນໃນການປະເມີນອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ແນໃສ່ປະກອບສ່ວນເຂົ້າໃນການສ້າງບ້ານພັດທະນາ.

**ມາດຕາ 2 ອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ**

ອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ໝາຍເຖິງອົງການປົກຄອງບ້ານມີການຈັດຕັ້ງທີ່ຄົບຖ້ວນ, ມີການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ; ມີການເຄື່ອນໄຫວບັນລຸຕາມທິດທາງແຜນການຂອງບ້ານເປັນແຕ່ລະໄລຍະ ແລະ ສາມາດນຳພາ, ຄຸ້ມຄອງບໍລິຫານວຽກງານຕ່າງໆຂອງບ້ານໄດ້ດີ.

**ມາດຕາ 3 ທິດນຳ**

ການຈັດຕັ້ງປະຕິບັດການສ້າງອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ໃຫ້ປະຕິບັດຕາມທິດນຳ ດັ່ງນີ້:

1. ຮັບປະກັນຄວາມເປັນເອກະພາບ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ຮັກສາໄດ້ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສາມັກຄີ;

3. ຈັດຕັ້ງປະຕິບັດໃຫ້ມີລັກສະນະຕໍ່ເນື່ອງ ແລະ ມີສະຖຽນລະພາບ;

4. ສຸມໃສ່ດ້ານຄຸນນະພາບ ໂດຍບໍ່ໃຫ້ເລັ່ງໃສ່ດ້ານຈຳນວນເປັນຕົ້ນຕໍ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບ້ານໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ມາດຕະຖານ, ຂັ້ນຕອນການສ້າງ, ວິທີການປະເມີນ ແລະ ການຢັ້ງຢືນ

**ມາດຕາ 5 ມາດຕະຖານ**

ອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ມີມາດຕະຖານ ດັ່ງນີ້:

1. ມີການຈັດຕັ້ງປະກອບບຸກຄະລາກອນໃນໜ່ວຍງານຊ່ວຍວຽກບ້ານຖືກຕາມລະບຽບການ ແລະ ເຄື່ອນໄຫວຕາມພາລະບົດບາດຢ່າງມີປະສິດທິຜົນ;

2. ມີກົດລະບຽບຂອງບ້ານ ໃນການຄຸ້ມຄອງບໍລິຫານ;

3. ມີແຜນພັດທະນາເສດຖະກິດ-ສັງຄົມຂອງບ້ານ;

4. ມີຫ້ອງການບ້ານ ທີ່ສາມາດນຳໃຊ້ເປັນບ່ອນເຮັດວຽກໄດ້;

5. ມີລະບອບປະຈຳການແກ້ໄຂວຽກຂອງອົງການປົກຄອງບ້ານເປັນປົກກະຕິ;

6. ມີລາຍຮັບສາມາດກຸ້ມລາຍຈ່າຍບໍລິຫານປົກກະຕິ ເປັນຕົ້ນ ຄ່າບິກ, ຄ່າເຈ້ຍ, ຄ່ານໍ້າ, ຄ່າໄຟ;

7. ມີການຈັດຕັ້ງໂຄສະນາ, ເຜີຍແຜ່, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ເປັນປົກກະຕິ;

8. ມີການຈົດທະບຽນການເກີດສຳລັບເດັກ 80% ຂຶ້ນໄປ ແລະ ມີການຈົດທະບຽນການເສຍຊີວິດ;

9. ມີການບໍລິການທີ່ດີຂອງອົງການປົກຄອງບ້ານ.

**ມາດຕາ 6 ຂັ້ນຕອນການສ້າງ**

ຫ້ອງການພາຍໃນເປັນເຈົ້າການ ຮັບຜິດຊອບໃນການສ້າງອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ໂດຍໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບການປະເມີນ;

2. ຄົ້ນຄວ້າກຳນົດບ້ານເປົ້າໝາຍ ແລະ ສ້າງແຜນການລະອຽດໃນການຈັດຕັ້ງປະຕິບັດແຕ່ລະໄລຍະ;

3. ນຳພາ ແລະ ຊຸກຍູ້ບ້ານເປົ້າໝາຍຕາມແຜນການທີ່ກຳນົດໄວ້;

4. ປະເມີນຜົນ ບ້ານເປົ້າໝາຍທຸກໆສາມເດືອນ ເພື່ອຊຸກຍູ້ ແລະ ປັບປຸງແກ້ໄຂຂໍ້ຄົງຄ້າງ;

5. ສະຫຼຸບລາຍງານຜົນການປະເມີນ ແລະ ສະເໜີອົງການປົກຄອງຂັ້ນເມືອງອອກໃບຢັ້ງຢືນອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນໃຫ້ສຳເລັດ ພາຍໃນເດືອນມີນາ ຂອງທຸກໆປີ.

**ມາດຕາ 7 ວິທີການປະເມີນ**

ການປະເມີນອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ແມ່ນການຕີລາຄາການປະຕິບັດວຽກງານຂອງອົງການປົກຄອງບ້ານໃນໄລຍະໜຶ່ງປີຜ່ານມາ ໂດຍໃຫ້ປະຕິບັດຕາມ ດັ່ງນີ້:

**1. ການກະກຽມການປະເມີນ**

1.1. ກະກຽມນິຕິກຳ ແລະ ເອກະສານທີ່ກ່ຽວຂ້ອງກັບການປະເມີນ;

1.2. ສ້າງແຜນກະກຽມດ້ານງົບປະມານໃນການຈັດຕັ້ງການປະເມີນ;

1.3. ປະສານສົມທົບ ແລະ ແຈ້ງພາກສ່ວນທີ່ກ່ຽວຂ້ອງ.

**2. ການດໍາເນີນການປະເມີນ**

2.1. ຈັດຕັ້ງເຊື່ອມຊຶມ ນິຕິກໍາ, ເອກະສານທີ່ກ່ຽວກັບການປະເມີນ;

2.2. ແຈກຢາຍ, ແນະນໍາຮ່າງແບບຟອມການປະເມີນ;

2.3. ກວດກາຂໍ້ມູນ, ເນື້ອໃນ ຕາມຮ່າງແບບຟອມການປະເມີນ;

2.4. ແຈ້ງຜົນຂອງການປະເມີນ ແລະ ວາງແຜນຊຸກຍູ້.

**3. ການສະຫຼຸບລາຍງານການປະເມີນ**

3.1. ສະຫຼຸບສັງລວມຜົນຂອງການປະເມີນ;

3.2. ລາຍງານ ແລະ ສະເໜີການຢັ້ງຢືນ.

**ມາດຕາ 8 ການຢັ້ງຢືນ**

ອົງການປົກຄອງບ້ານ ທີ່ໄດ້ຜ່ານການປະເມີນຄົບຕາມມາດຕະຖານທີ່ກໍານົດ ຈະໄດ້ຮັບການຢັ້ງຢືນເປັນອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ໂດຍແມ່ນຫົວໜ້າຫ້ອງການພາຍໃນສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາຕົກລົງ ແລະ ອອກໃບຢັ້ງຢືນ.

## ໝວດທີ 3
## ນະໂຍບາຍ ແລະ ມາດຕະການ

**ມາດຕາ 9 ນະໂຍບາຍຕໍ່ບ້ານ ແລະ ບຸກຄົນ**

ອົງການປົກຄອງບ້ານ ແລະ ບຸກຄົນ ທີ່ມີການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໄດ້ດີ, ມີຄວາມເຂັ້ມງວດ ຈະໄດ້ຮັບການສະເໜີພິຈາລະນາຮັບການຍ້ອງຍໍຊົມເຊີຍ ຫຼື ນະໂຍບາຍອື່ນຕາມຄວາມເໝາະສົມ.

**ມາດຕາ 10 ມາດຕະການຕໍ່ບ້ານ ແລະ ບຸກຄົນ**

ອົງການປົກຄອງບ້ານ ແລະ ບຸກຄົນ ທີ່ປະຕິບັດຂໍ້ຕົກລົງສະບັບນີ້ບໍ່ໄດ້ດີຈະໄດ້ຮັບການແນະນໍາ, ສຶກສາອົບຮົມຕາມລະບຽບການ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 11 ການຈັດຕັ້ງປະຕິບັດ**

1. ການປະເມີນອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນແມ່ນໃຫ້ດໍາເນີນໄປແຕ່ລະປີພາຍຫຼັງທີ່ໄດ້ຮັບການຢັ້ງຢືນເປັນອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ແລະ ໃຫ້ສອດຄ່ອງກັບການສະຫຼຸບລາຍງານຂອງມາດຕະຖານການສ້າງບ້ານພັດທະນາ;

2. ກົມການປົກຄອງທ້ອງຖິ່ນ, ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ, ແນະນໍາ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ;

3. ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບກັນ;

4. ພະແນກພາຍໃນ, ຫ້ອງການພາຍໃນ, ອົງການປົກຄອງບ້ານ ຈົ່ງຮັບຮູ້ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ *969/ພນ, ລົງວັນທີ 26 ທັນວາ 2016 ວ່າດ້ວຍ ມາດຕະຖານບ້ານໜັກແໜ້ນເຂັ້ມແຂງ.*

ລັດຖະມົນຕີ

ປອ. ທອງຈັນ ມະນີໄຊ

ເອກະສານຊ້ອນທ້າຍ 1: *ຮ່າງຕົວຢ່າງແບບສະຫຼຸບການປະເມີນ*

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ,ເທດສະບານ,ນະຄອນ

ຫ້ອງການພາຍໃນ

## (ຮ່າງຕົວຢ່າງ) ສະຫຼຸບການປະເມີນມາດຕະຖານອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ

ບ້ານ........................ວັນທີ.....ເດືອນ.......ປີ........

| ລ/ດ | ເນື້ອໃນມາດຕະຖານ | ບັນລຸຕາມ ມາດຕະຖານ | ບໍ່ບັນລຸຕາມ ມາດຕະຖານ |
|---|---|---|---|
| 1 | ມີການຈັດຕັ້ງປະກອບບຸກຄະລາກອນໃນໜ່ວຍງານຊ່ວຍວຽກບ້ານຖືກຕາມລະບຽບການ ແລະ ເຄື່ອນໄຫວຕາມພາລະບົດບາດຢ່າງມີປະສິດທິຜົນ | | |
| 2 | ມີກົດລະບຽບຂອງບ້ານ ໃນການຄຸ້ມຄອງບໍລິຫານ | | |
| 3 | ມີແຜນພັດທະນາເສດຖະກິດ-ສັງຄົມຂອງບ້ານ | | |
| 4 | ມີຫ້ອງການບ້ານ ທີ່ສາມາດນຳໃຊ້ເປັນບ່ອນເຮັດວຽກໄດ້ | | |
| 5 | ມີລະບອບປະຈຳການແກ້ໄຂວຽກຂອງອົງການປົກຄອງບ້ານເປັນປົກກະຕິ | | |
| 6 | ມີລາຍຮັບສາມາດກຸ້ມລາຍຈ່າຍບໍລິຫານປົກກະຕິ ເປັນຕົ້ນ ຄ່າບິກ,ຄ່າເຈ້ຍ, ຄ່ານ້ຳ, ຄ່າໄຟ | | |
| 7 | ມີການຈັດຕັ້ງໂຄສະນາ, ເຜີຍແຜ່, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດເປັນປົກກະຕິ | | |
| 8 | ມີການຈົດທະບຽນການເກີດສຳລັບເດັກ 80% ຂຶ້ນໄປ ແລະ ມີການຈົດທະບຽນການເສຍຊີວິດ | | |
| 9 | ມີການບໍລິການທີ່ດີຂອງອົງການປົກຄອງບ້ານ | | |
| ລວມ | | | |

**ສະຫຼຸບ:**

- ບ້ານ..................ບັນລຸຄົບຕາມມາດຕະຖານ.
- ບ້ານ..................ບໍ່ບັນລຸຄົບຕາມມາດຕະຖານ.

ຫົວໜ້າຫ້ອງການພາຍໃນ                    ຄະນະຮັບຜິດຊອບການປະເມີນ

# (ຮ່າງຕົວຢ່າງ) ການກອດກາຂໍ້ມູນການປະເມີນ
# ມາດຕະຖານອີງການປົກຄອງບ້ານເຂັ້ມແຂງໜັກແໜ້ນ

ບ້ານ........; ເມືອງ/ເທດສະບານ/ນະຄອນ.................; ແຂວງ/ນະຄອນຫຼວງ ..........................
ຈຳນວນຄອບຄົວ......ຄອບຄົວ; ຈຳນວນຫຼັງຄາເຮືອນ......ຈຳນວນພົນລະເມືອງ.........ຄົນ; ເພດຍິງ......ຄົນ

ໃຫ້ໃຊ້ເຄື່ອງໝາຍ √ ຂີດໃສ່ໃນຫ້ອງສີ່ລ່ຽມ ☐ ແລະ ຂຽນຄຳຕອບໃສ່ບ່ອນ (.....................)

1. ມີການຈັດຕັ້ງປະກອບບຸກຄະລາກອນໃນໜ່ວຍງານຊ່ວຍວຽກບ້ານຖືກຕາມລະບຽບການ ແລະ ເຄື່ອນໄຫວຕາມພາລະບົດບາດຢ່າງມີປະສິດທິຜົນ
   - ໜ່ວຍງານຊ່ວຍວຽກ.................ໜ່ວຍງານ
   - ຮອງນາຍບ້ານ ........................ທ່ານ
   - ພະນັກງານຊ່ວຍວຽກບ້ານ............ທ່ານ

   ຖືກຕາມລະບຽບການ ☐ ບໍ່ຖືກຕາມລະບຽບການ ☐
2. ມີກົດລະບຽບຂອງບ້ານ ໃນການຄຸ້ມຄອງບໍລິຫານ

   ມີ ☐ ບໍ່ມີ ☐
3. ມີແຜນພັດທະນາເສດຖະກິດ-ສັງຄົມຂອງບ້ານ

   ມີ ☐ ບໍ່ມີ ☐
4. ມີຫ້ອງການບ້ານ ທີ່ສາມາດນຳໃຊ້ເປັນບ່ອນເຮັດວຽກໄດ້

   ມີ ☐ ບໍ່ມີ ☐
5. ມີລະບອບປະຈຳການແກ້ໄຂວຽກຂອງອົງການປົກຄອງບ້ານເປັນປົກກະຕິ

   ເປັນປົກກະຕິ ☐ ບໍ່ເປັນປົກກະຕິ ☐
6. ມີລາຍຮັບສາມາດກຸ້ມລາຍຈ່າຍບໍລິຫານປົກກະຕິ ເປັນຕົ້ນ ຄ່າບິກ,ຄ່າເຈ້ຍ, ຄ່ານໍ້າ, ຄ່າໄຟ

   ສາມາດກຸ້ມໄດ້ ☐ ບໍ່ສາມາດກຸ້ມໄດ້ ☐
7. ມີການຈັດຕັ້ງໂຄສະນາ, ເຜີຍແຜ່, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ເປັນປົກກະຕິ

   ໄດ້ຈັດຕັ້ງ ☐ ບໍ່ໄດ້ຈັດຕັ້ງ ☐
8. ມີການຈົດທະບຽນການເກີດສຳລັບເດັກ 80% ຂຶ້ນໄປ ແລະ ມີການຈົດທະບຽນການເສຍຊີວິດ
   - ❖ ການຈົດທະບຽນການເກີດສຳລັບເດັກ ໃນປີ...............
     - ຈຳນວນເດັກທັງໝົດ..................ຄົນ
     - ຈຳນວນເດັກຈົດທະບຽນການເກີດມີ................ຄົນ ເທົ່າກັບ............%

     ໄດ້ຮັບການຈົດທະບຽນ 80% ຂຶ້ນໄປ ☐ ໄດ້ຮັບການຈົດທະບຽນຫຼຸດ 80% ☐
   - ❖ **ການຈົດທະບຽນການເສຍຊີວິດ ໃນປີ**.....................
     - ຈຳນວນຜູ້ເສຍຊີວິດ...................ຄົນ
     - ຈຳນວນຈົດທະບຽນການເສຍຊີວິດ...........ຄົນ

     ໄດ້ຮັບການຈົດທະບຽນຄົບ ☐ ບໍ່ໄດ້ຮັບການຈົດທະບຽນຄົບ ☐

**9. ມີການບໍລິການທີ່ດີຂອງອົງການປົກຄອງບ້ານ**

ການບໍລິການທີ່ດີຂອງອົງການປົກຄອງບ້ານຕ້ອງມີຄວາມເພິ່ງພໍໃຈຈາກປະຊາຊົນ 80% ຂຶ້ນໄປ ຂອງຈຳນວນປະຊາຊົນຜູ້ໃຫ້ຂໍ້ມູນ (ມີຮ່າງສຳຫຼວດຄວາມເພິ່ງພໍໃຈຕ່າງຫາກ)

- **ຈຳນວນ**ປະຊາຊົນຜູ້ໃຫ້ຂໍ້ມູນ.....................ຄົນ
- **ຈຳນວນ**ເພິ່ງພໍໃຈມີ.......................ຄົນ ເທົ່າກັບ..................%
- **ຈຳນວນ**ບໍ່ເພິ່ງພໍໃຈມີ.....................ຄົນ ເທົ່າກັບ..................%

ບັນລຸ ☐ ບໍ່ທັນບັນລຸ ☐

**ຮັບຮູ້ໂດຍນາຍບ້ານ** **ຜູ້ຮັບຜິດຊອບ**

ເອກະສານຊ້ອນທ້າຍ 3: *ຮ່າງຕົວຢ່າງແບບສຳຫຼວດສອບຖາມ*

## (ຮ່າງຕົວຢ່າງ) ໃບສຳຫຼວດ
## ຄວາມເພິ່ງພໍໃຈຂອງປະຊາຊົນຕໍ່ການບໍລິການຂອງອົງການປົກຄອງບ້ານ

ທີ່ບ້ານ.......................ວັນທີ...........ເດືອນ...........ປີ.................

❖ ຜູ້ໃຫ້ຂໍ້ມູນ(ອາຍຸ 18 ປີຂຶ້ນ):

ເພດ........................., ເຜົ່າ...................................., ອາຍຸ.............................................

ລະດັບການສຶກສາ......................................................, ອາຊີບ.........................................

❖ ຄຳຄິດເຫັນຂອງຜູ້ໃຫ້ຂໍ້ມູນ: ຈົ່ງໃຫ້ ລະດັບຄະແນນ ໃສ່ໃນ ☐

ລະດັບຄະແນນມີ: ດີຫຼາຍ: 5 , ດີ: 4 , ປານກາງ: 3 , ອ່ອນ: 2 , ອ່ອນຫຼາຍ: 1 .

1. ການບໍລິການ, ແກ້ໄຂວຽກງານ, ໃຫ້ການຮ່ວມມື ຂອງອົງການປົກຄອງບ້ານ ໃນເວລາທີ່ທ່ານໄປພົວພັນ ເປັນແນວໃດ?

   ☐ ດີຫຼາຍ ☐ ດີ ☐ ປານກາງ ☐ ອ່ອນ ☐ ອ່ອນຫຼາຍ

2. ການນຳພາປະຊາຊົນ ຂອງອົງການປົກຄອງບ້ານ ໃນການຈັດຕັ້ງປະຕິບັດວຽກງານລວມຂອງບ້ານ ເປັນແນວໃດ?

   ☐ ດີຫຼາຍ ☐ ດີ ☐ ປານກາງ ☐ ອ່ອນ ☐ ອ່ອນຫຼາຍ

3. ອົງການປົກຄອງບ້ານໄດ້ເອົາໃຈໃສ່ແຈ້ງການ ຫຼື ປະຊາສຳພັນຂໍ້ມູນຂ່າວສານວຽກງານຕ່າງໆ ເປັນແນວໃດ?

   ☐ ດີຫຼາຍ ☐ ດີ ☐ ປານກາງ ☐ ອ່ອນ ☐ ອ່ອນຫຼາຍ

➢ ຄຳຄິດເຫັນຂອງທ່ານຕໍ່ອົງການປົກຄອງບ້ານ.......................................................................

..........................................................................................................................

- ເວລາເລີ່ມຕົ້ນການໃຫ້ຂໍ້ມູນ:..........................................................................................
- ເວລາສຳເລັດການໃຫ້ຂໍ້ມູນ:...........................................................................................
- ຜູ້ຮັບຜິດຊອບສອບຖາມ ແລະ ບັນທຶກຂໍ້ມູນ:.......................................................................

## (ຮ່າງຕົວຢ່າງ)
## ຜົນການສຳຫຼວດຄວາມເພິ່ງພໍໃຈຕໍ່ການບໍລິການຂອງອົງການປົກຄອງບ້ານ

| ລ/ດ | ເນື້ອໃນສຳຫຼວດ | ຄະແນນ |
|---|---|---|
| 1 | ການບໍລິການ, ແກ້ໄຂວຽກງານ, ໃຫ້ການຮ່ວມມື… | |
| 2 | ການນຳພາປະຊາຊົນ… | |
| 3 | ອົງການປົກຄອງບ້ານໄດ້ເອົາໃຈໃສ່ແຈ້ງການ ຫຼື ປະຊາສຳພັນ.... | |
| ຄະແນນລວມ | | |
| ຄະແນນສະເລ່ຍ | | |

ໝາຍເຫດ: ຄະແນນສະເລ່ຍຄຳຄິດເຫັນຂອງປະຊາຊົນ ທີ່ສະແດງເຖິງຄວາມເພິ່ງພໍໃຈຕ້ອງມີ ຄະແນນສະເລ່ຍ 3 ຂຶ້ນໄປ.

ເອກະສານຊ້ອນທ້າຍ 4: *ຮ່າງຕົວຢ່າງແບບໃບຢັ້ງຢືນບ້ານເຂັ້ມແຂງໜັກແໜ້ນ*

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ / ນະຄອນຫຼວງ

ເມືອງ / ເທດສະບານ / ນະຄອນ

ເລກທີ..../....

ທີ່........,ວັນທີ......................

# ໃບຢັ້ງຢືນ

## ອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ

ເຈົ້າເມືອງ / ຫົວໜ້າເທດສະບານ / ເຈົ້ານະຄອນ ຢັ້ງຢືນວ່າ: ອົງການປົກຄອງບ້ານ.........................
ເປັນອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ປະຈຳປີ....................................... ທີ່ບັນລຸຄົບມາດຕະຖານ.

ດັ່ງນັ້ນ, ຈຶ່ງຮັບຮອງ ແລະ ອອກໃບຢັ້ງຢືນໄວ້ເພື່ອສົມລະເສີນໃຫ້ແກ່ຜົນງານອັນມີຄວາມສຳຄັນນີ້.

ເຈົ້າເມືອງ / ຫົວໜ້າເທດສະບານ / ເຈົ້ານະຄອນ

ອົງການປົກຄອງບ້ານ
ເຂັ້ມແຂງໜັກແໜ້ນ